ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0054/22-ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 18 ກຸມພາ 2022

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2022, ທີ່ຈະຈັດຂຶ້ນໃນວັນທີ 18 ກຸມພາ 2022

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2022 ທີ່ຈັດຂຶ້ນໃນວັນທີ 18 ກຸມພາ 2022 ເຊິ່ງມີວາລະຮັບຮອງເອົາບັນຫາທີ່ສຳຄັນດັ່ງນີ້:

1. ຮັບຮອງງົບສະແດງຖານະການເງິນຂອງບໍລິສັດ ປະຈຳໄຕມາດ 3 ປີ 2021
2. ອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2022 ເພື່ອສະເໜີໃຫ້ຜູ້ຖືຮຸ້ນພິຈາລະນາຕໍ່ໄປ
3. ອະນຸມັດແຜນບໍລິຫານຄວາມສ່ຽງປະຈຳປີ 2022
4. ອະນຸມັດຫຼັກເກນ ແລະ ແນວທາງການຄັດເລືອກສະມາຊິກສະພາບໍລິຫານຊຸດໃໝ່ທົດແທນຊຸດເກົ່າທີ່ຈະໝົດວາລະລົງ
5. ອະນຸມັດການກະສຽນອາຍຸຂອງພະນັກງານລະດັບຮອງຜູ້ອຳນວຍການ
6. ອະນຸມັດເງິນກູ້ຢືມຈາກທະນາຄານທຸລະກິດໃນລາວ

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ນາມ ຕຣີລິດວິໄລ)